ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBILC
ທັນສະໄໝ ວ່ອງໄວ ໜັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 042 /ທຄຕລ.2020

ນະຄອນຫລວງວຽງຈັນ, ວັນທີ: 24 APR 2020

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ, ຫ້າງຮ້ານຕົວແທນຈຳໜ່າຍຮ້ານຂາຍສິ້ນ ແລະ ແພເສື້ອ ຢູ່ໃນນະຄອນຫລວງວຽງຈັນ.

**ເລື່ອງ** : ແຈ້ງເຊີນເຂົ້າຮ່ວມຍື່ນຊອງໃບປະເມີນລາຄາສິ້ນ ແລະ ແພເສື້ອ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງທ່ານຊາບບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນທີ່ມີຄວາມສົນໃຈຍື່ນຊອງປະເມີນລາຄາ ສິ້ນ ແລະ ແພເສື້ອທີ່ ທຄຕລ ກຳນົດສັ່ງໃຫ້, ການຍື່ນຊອງປະເມີນລາຄາຕ້ອງປະກອບເອກະສານຕາມເງື່ອນໄຂດັ່ງລຸ່ມນີ້ :

| ລ/ດ | ລາຍການ | ເງື່ອນໄຂກ່ຽວກັບສິ້ນ | ຈຳນວນ |
|---|---|---|---|
| 1 | ສິ້ນຈຸດດຳ | - ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນສິ້ນ ແລະ ຕີນສິ້ນ.<br>- ການຕຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕຳ 3 ເສັ້ນ ແລະ ຕີນສິ້ນໃຊ້ໄໝຫຼາບລ່ອງເບີ 1 ຕຳ 6 ເສັ້ນ.<br>- ຕ້ອງໃຊ້ໄໝຄຳເບີ 1 ແລະ ໄໝຄຳສີທອງ ເບີ 1 ໃນການເກາະ ຫຼື ຊັດ ( ລວມທັງຕີນສິ້ນ ແລະ ຜືນ ).<br>- ຕີນສິ້ນຕ້ອງເປັນຝືມ 10 ລົບ ຄວາມກ້ວາງ 19 ຊມ.<br>- ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |
| 2 | ສິ້ນຂັ້ນ | - ຕ້ອງເປັນສິ້ນໄໝຫຼາບເບີ 1 ທັງຜືນ ແລະ ຕີນສິ້ນ.<br>- ການຕຳຜືນສິ້ນ ແມ່ນໃຊ້ໄໝຫຼາບເບີ 1 ຕຳ 3 ເສັ້ນ.<br>- ຕີນສິ້ນໃຊ້ໄໝຫຼາບເບີ 1, ລ່ອງ 6 ເສັ້ນ.<br>- ໃຊ້ໄໝຄຳເບີ 12 ແລະ ໄໝຄຳທອງເບີ 3 ໃນການເກາະ ແລະ ຊັດ ( ລວມທັງຜືນສິ້ນ ແລະ ຕີນເສັ້ນ ).<br>- ຕີນສິ້ນຕ້ອງເປັນຝືມ 10 ລົບ ຄວາມກ້ວາງ 19 ຊມ.<br>- ຜືນສິ້ນຕ້ອງກ້ວາງ 180 ຊມ. | 800 ຜືນ |
| 3 | ແພເສື້ອ | - ແພສີສົ້ມ ເນື້ອຝ້າຍ 60% ແລະ ເນື້ອນິລົງ 40 % ນ້ຳເບີ 1 ໜ້າກ້ວາງ 1. 5 ແມັດ<br>**ໝາຍເຫດ** : ສາມາດເອົາຕົວຢ່າງແພ ນຳ ທຄຕລ ໄດ້.<br>- ຖ້າບໍລິສັດສາມາດອອກແບບເປັນເອກະລັກສະເພາະຂອງ ທຄຕລ ແມ່ນໃຫ້ສະເໜີເງື່ອນມາໄດ້. | 2.700 ແມັດ |

1. **ເງື່ອນໄຂຂອງບໍລິສັດ ,ຫ້າງຮ້ານຜູ້ສະໜອງທີ່ຈະຍື່ນຊອງປະມູນຕ້ອງປະກອບມີລາຍການດັ່ງນີ້:**

- **ບັນຈຸໃສ່ຊອງທີ1 (ບໍ່ປິດຊອງ):** ໃບທະບຽນວິສາຫະກິດ, ໃບຢັ້ງຢືນການມອບພັນທະອາກອນປີປະຈຸບັນ, ໃບຢັ້ງຢືນເປັນຕົວແທນຈຳໜ່າຍ ( ຖ້າມີ ). ກຳນົດການຍື່ນຊອງກ່ອນ 14:00 ໂມງຂອງ ວັນທີ 15/05/2020 ໃນໂມງລັດຖະການທີ່ ພະແນກຫ້ອງການບໍລິຫານ-ການເງິນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C ແລະ **ຄັດຕິດສິນຄ້າຕົວຢ່າງທີ່ຈະເຂົ້າຮ່ວມປະມູນມາພ້ອມ.**
- **ບັນບັນຈຸໃສ່ຊອງທີ່2 (ປິດຊອງ):** ໃບສະເໜີລາຄາ (ຕ້ອງກຳນົດເປັນເງິນກີບລວມອາກອນ).
  - ສະເໜີລາຄາເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ(10%)
  - ຮ້ານຜູ້ສະໜອງຕ້ອງຖືຊອງປະເມີນວາງເງິນຄ້ຳປະກັນການປະເມີນ 2% ຂອງມູນຄ່າທັງໝົດຕາມໃບປະເມີນລາຄາ, ຈາກບັນຊີເງິນຝາກ ຫຼື ໜັງສືຄ້ຳປະກັນຈາກທະນາຄານ ກຳນົດນຳໃຊ້ເຖິງ ວັນທ 29/05/20, ພາຍຫລັງປະກາດຜົນ ທຄຕລ ຈະສົ່ງເງິນ ຫຼື ໜັງສືຄ້ຳປະກັນດັ່ງກ່າວຄືນ.

1. **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ, ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- ງວດທີ1: ຊຳລະ 15% ຂອງມູນຄ່າພາຍຫລັງເຊັນສັນຍາທັງສອງຝ່າຍ ແລະ ສຳເລັດການຈົດທະບຽນສັນຍາຈາກພາກສ່ວນທີ່ກ່ຽວຂ້ອງ.
- ງວດທີ2: ຊຳລະ 85% ຂອງມູນຄ່າສັນຍາທັງໝົດພາຍຫຼັງມອບຮັບເຄື່ອງເຂົ້າສາງຄົບຖ້ວນແລ້ວ, ພາຍໃນ10ວັນລັດຖະການ.
- ຮ້ານຜູ້ສະໜອງທີ່ຊະນະການປະມູນ ແມ່ນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າໃຊ້ຈ່າຍໃນການຈົດທະບຽນສັນຍາ, ຄ່າສິ້ນເປືອງອື່ນໆ ແມ່ນເປັນຄວາມຮັບຜິດຊອບຂອງຮ້ານຜູ້ສະໜອງ.

**ໝາຍເຫດ:**

1. ໃນມື້ຍື່ນຊອງປະເມີນລາຄາສິ້ນ ແລະ ແພເສື້ອ ແມ່ນທາງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈະໄດ້ແຈ້ງຕາມພາຍຫຼັງ.
2. **ລົບລ້າງໃບແຈ້ງເຊີນປະມູນສະບັບເລກທີ 036/ທຄຕລ 2020 ລົງວັນທີ 30/03/2020.**

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮ. **ຜູ້ອຳນວຍການ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ສຳນັກງານໃຫຍ່ ນະຄອນຫລວງວຽງຈັນ

ລາໃຈ ຄັນພຣະວົງສ໌

ຕິດຕໍ່ພົວພັນ:

ຂະແໜງສະໜອງວັດຖຸເຕັກນິກ

021 213200 ຕໍ່ 414